# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-20 ພຶດສະພາ 2022
ປີທີ 11
ສະບັບທີ 844


## ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຢ້ຽມຢາມສົມທະວະໄມຕີ ສປປລາວ ຢ່າງເປັນທາງການ




(ສພຊ) ໃນລະຫວ່າງວັນທີ 15-17 ພຶດສະພາ 2022 ສະຫາຍ ເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໄດ້ເດີນທາງມາຢ້ຽມຢາມສົມທະວະໄມຕີ ສປປລາວ ຢ່າງເປັນທາງການ ຕາມການເຊື້ອເຊີນຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ທັງເປັນການຢ້ຽມຢາມ ສປປລາວ ຄັ້ງທຳອິດໃນນາມປະທານສະພາແຫ່ງຊາດຫວຽດນາມ ຊຸດທີ XV ແລະ ເປັນຄະນະຜູ້ແທນຂັ້ນສູງ ຂອງອົງການນິຕິບັນຍັດຕ່າງປະເທດ ຄະນະທຳອິດທີ່ມາຢ້ຽມຢາມສະພາແຫ່ງຊາດລາວ ຊຸດທີ IX.

ການຢ້ຽມຢາມຄັ້ງນີ້ ມີຂຶ້ນໃນທ່າມກາງບັນຍາກາດການສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ກໍຄືວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022) ເຊິ່ງເປັນການສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມເວົ້າລວມ ເວົ້າສະເພາະລະຫວ່າງ ສອງສະພາແຫ່ງຊາດຂອງສອງປະເທດ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ໃນຕອນບ່າຍຂອງວັນທີ 15 ພຶດສະພາ 2022, ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດຫວຽດນາມ ໄດ້ເຂົ້າຮ່ວມພິທີເປີດ ໂຄງການກໍ່ສ້າງສວນສາທາລະນະມິດຕະພາບ ລາວ-ຫວຽດນາມ, ຢ້ຽມຢາມທະນາຄານ BIDV,

ອ່ານຕໍ່ໜ້າ 2

## ພິທີເປີດໂຄງການສວນສາທາລະນະມິດຕະພາບ ລາວ-ຫວຽດນາມ




ໜ້າ 3

## ຮອງປະທານ ສພຊ ຕ້ອນຮັບທູດກູບາ ປະຈຳ ສປປລາວ



(ສພຊ) ວັນທີ 13 ພຶດສະພາຜ່ານມາ, ທີ່ສະພາແຫ່ງຊາດ ທ່ານ ສຈ. ປອ ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ທັງເປັນປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ Enna Esther Viant Valdes ເອກອັກຄະລັດຖະທູດ ແຫ່ງ ສາທາລະນະລັດກູບາ ປະຈຳ ສປປລາວ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ມາດຳລົງຕຳແໜ່ງເປັນເອກອັກຄະລັດຖະທູດປະຈຳ ສປປລາວ ຄົນໃໝ່.

ໃນໂອກາດດັ່ງກ່າວ, ທ່ານ ສຈ. ປອ ຈະເລີນ ເຢຍປາວເຮີ ໄດ້ກ່າວສະແດງຄວາມຕ້ອນຮັບອັນອົບອຸ່ນ ພ້ອມທັງສະແດງຄວາມຍິນດີນຳທ່ານ ນາງ Enna Esther Viant Valdes ທີ່ໄດ້ຮັບຄວາມໄວ້ວາງໃຈຈາກພັກ, ລັດຖະບານ ແລະ ປະຊາຊົນ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ




(ສພຊ) ເພື່ອຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ເພື່ອນຳເອົາຄຳສະເໜີຕ່າງໆ ນຳໄປຄົ້ນຄວ້າ, ພິຈາລະນາ, ປັບປຸງແກ້ໄຂໃຫ້ເນື້ອໃນກົດໝາຍມີເນື້ອໃນຄົບຖ້ວນສົມບູນ; ໃນວັນທີ 11 ພຶດສະພາ 2022 ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ຢູ່ແຂວງຫລວງນ້ຳທາ ເຊິ່ງໄດ້ເຂົ້າພົບທ່ານ ຈັນທອງ ແກ້ວປະເສີດ ຮອງເລຂາພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ ເພື່ອລາຍງານຈຸດປະສົງຂອງການເຄື່ອນໄຫວ

ອ່ານຕໍ່ໜ້າ 2

## ກສຕສ ແລະ ກະຊວງພະລັງງານ ແລະ ບໍ່ແຮ່ ເຊັນຂໍ້ຕົກລົງສະບັບທຳອິດຮ່ວມກັນ




(ສພຊ) ຂໍ້ຕົກລົງວ່າດ້ວຍການປະສານງານ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດກັບກະຊວງພະລັງງານ ແລະ ບໍ່ແຮ່ ຖືວ່າເປັນຂໍ້ຕົກລົງຮ່ວມສະບັບທຳອິດທີ່ກຳມາທິການ ແລະ ກະຊວງດັ່ງກ່າວໄດ້ລົງລາຍເຊັນຮ່ວມເປັນລາຍລັກອັກສອນ ເຖິງວ່າໄລຍະຜ່ານມາ ກຳມາທິການ ແລະ ກະຊວງ ໄດ້ມີການພົວ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 7


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5



## ຄະນະ...

ພົບປະກັບສະມາຄົມນັກທຸລະກິດຫວຽດນາມ ແລະ ພົບປະຢ້ຽມຢາມພະນັກງານສະຖານທູດຫວຽດນາມ.

ໃນຕອນເຊົ້າຂອງວັນທີ 16 ພຶດສະພາ 2022 ພາຍຫລັງທີ່ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຫວຽດນາມ ໄດ້ວາງພວງມາລາ ທີ່ອະນຸສາວະລີນັກຮົບນິລະນາມແລ້ວ, ຄະນະ ໄດ້ເຂົ້າຮ່ວມພິທີຕ້ອນຮັບ ເຊິ່ງຈັດຂຶ້ນຢ່າງເປັນທາງການ ແລະ ສົມກຽດ ທີ່ຫໍສະພາແຫ່ງຊາດລາວ ໂດຍສະຫາຍໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດລາວ ພ້ອມດ້ວຍບັນດາສະຫາຍຮອງປະທານສະພາແຫ່ງຊາດ, ກຳມະການຄະນະປະຈຳ, ປະທານ-ຮອງປະທານກຳມາທິການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດລາວ ເຂົ້າຮ່ວມຢ່າງພ້ອມພຽງ.

ພາຍຫລັງພິທີຕ້ອນຮັບຢ່າງເປັນທາງການແລ້ວ, ສະຫາຍປະທານສະພາແຫ່ງຊາດລາວ ແລະ ຫວຽດນາມ ໄດ້ດຳເນີນການພົບປະສອງຝ່າຍຢ່າງເປັນທາງການ, ສອງຝ່າຍ ໄດ້ຮ່ວມກັນຕີລາຄາຄືນ ການພົວພັນ ແລະ ການຮ່ວມມື ລະຫວ່າງສອງປະເທດ ກໍຄືລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງແຜນການພົວພັນຮ່ວມມືໃນຕໍ່ໜ້າ ເປັນຕົ້ນແມ່ນການສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດໃຈຂອງບົດບັນທຶກວ່າດ້ວຍການຮ່ວມມື ລະຫວ່າງສອງປະທານສະພາແຫ່ງຊາດ, ການຮ່ວມກັນຈັດບັນດາກິດຈະກຳສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ກໍຄືການແລກປ່ຽນ ຄະນະຜູ້ແທນ, ການຈັດຕັ້ງກອງປະຊຸມສຳມະນາແລກປ່ຽນບົດຮຽນ, ການຮ່ວມກັນຕິດຕາມກວດກາ, ການຮ່ວມມື ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເຊັ່ນ: IPU, AIPA, APPF, APF ແລະ ອື່ນໆ. ປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຂອບໃຈຕໍ່ ສະຫາຍປະທານສະພາແຫ່ງຊາດຫວຽດນາມ ທີ່ຈະໃຫ້ການຮ່ວມມື ແລະ ສະໜັບສະໜູນແກ່ສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມສະພາແຫ່ງຊາດ ຂອງ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ (CLV) ໃນປີ 2023 ແລະ ກອງປະຊຸມໃຫຍ່ສະມັດຊາລັດຖະສະພາ ລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນປີ 2024 ໜ້ານີ້.

ພາຍຫລັງການພົບປະ, ສອງປະທານສະພາແຫ່ງຊາດ ກໍໄດ້ຮ່ວມລົງນາມ ໃນບົດບັນທຶກວ່າດ້ວຍການຮ່ວມມື ລະຫວ່າງສອງສະພາແຫ່ງຊາດ ແລະ ຮ່ວມກັນເປັນສັກຂີພິຍານໃນພິທີເຊັນບົດບັນທຶກການຮ່ວມມື ລະຫວ່າງກຳມາທິການບັນດາເຜົ່າ, ສະພາແຫ່ງຊາດລາວ ແລະ ສະພາຊົນຊາດ, ສະພາແຫ່ງຊາດຫວຽດນາມ, ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ເຊິ່ງເປັນນິຕິກຳບ່ອນອີງໃຫ້ແກ່ການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ. ຈາກນັ້ນ, ສອງຝ່າຍກໍໄດ້ຮ່ວມກັນປູກຕົ້ນໄມ້ຢູ່ຂ້າງຫໍສະພາແຫ່ງຊາດຫລັງໃໝ່.

ໃນໄລຍະຢ້ຽມຢາມຢູ່ ສປປລາວ, ສະຫາຍປະທານສະພາແຫ່ງຊາດຫວຽດນາມ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ, ສະຫາຍນາຍົກລັດຖະມົນຕີ, ບັນດາ ສະຫາຍອະດີດການນຳພັກ, ລັດ ແລະ ສະພາແຫ່ງຊາດ ແຫ່ງ ສປປລາວ. ໃນການພົບປະ, ບັນດາສະຫາຍ ການນຳ, ອະດີດການນຳຂອງພັກ, ລັດ ແລະ ສະພາແຫ່ງຊາດ ໄດ້ຕີລາຄາການພົວພັນຮ່ວມມືສອງຝ່າຍ ຫລາຍໄລຍະຜ່ານມາ ແລະ ພິເສດ ການຢ້ຽມຢາມຄັ້ງນີ້ ພໍດີຢູ່ໃນບັນຍາກາດສະຫລອງສອງວັນປະຫວັດສາດ ກໍຄືວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022) ຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າ ສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ແລະ ຂອບໃຈຢ່າງຈິງໃຈມາຍັງພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຕໍ່ການສະໜັບສະໜູນ ແລະ ການຊ່ວຍເຫລືອອັນໃຫຍ່ຫລວງ, ລ້ຳຄ່າ ແລະ ທັນການ ໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ.

## ຮອງປະທານ...



ເຮັດວຽກຢູ່ແຂວງຫລວງນ້ຳທາ ພ້ອມທັງໄດ້ຮັບຟັງການລາຍງານສະພາບຕົວຈິງໃນການຈັດຕັ້ງປະຕິບັດວຽກງານພາຍໃນແຂວງໂດຍຫຍໍ້.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ເປີດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍຈຳນວນ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ຢູ່ສະໂມສອນຂອງແຂວງຫລວງນ້ຳທາ ໂດຍການເປັນປະທານຂອງທ່ານ ພຊ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ຄຳຟອງ ອິນມະນີ ປະທານສະພາປະຊາຊົນແຂວງ, ມີຄະນະປະຈຳພັກແຂວງ, ຄະນະຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ; ໃນກອງປະຊຸມໄດ້ຮັບຟັງການລາຍງານຂອງບັນດາພະແນກການກ່ຽວຂ້ອງຂອງແຂວງ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບດັ່ງກ່າວ ຕາມຄຳຖາມເຈາະຈີ້ມຂອງກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເປັນຕົ້ນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດປະຕິບັດກົດໝາຍຂອງທ້ອງຖິ່ນໃນໄລຍະຜ່ານມາ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ແລກປ່ຽນປະກອບຄຳຄິດຄຳເຫັນໃສ່ບັນດາກົດໝາຍ ຈຳນວນ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ຢ່າງກົງໄປກົງມາ ເພື່ອເປັນຂໍ້ມູນນຳໄປຄົ້ນຄວ້າ, ປັບປຸງແກ້ໄຂກົດໝາຍດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນສົມບູນ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຄຸນນະພາບສູງສຸດ.

ຕອນທ້າຍ, ຍັງໄດ້ຮັບຟັງຄຳເຫັນໂອ້ລົມຂອງທ່ານ ພຊ. ສຸວອນ ເລືອງບຸນມີ ເຊິ່ງທ່ານໄດ້ກ່າວວ່າ: ການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ພາຍໃນແຂວງ ເຫັນວ່າມີຄວາມເຂັ້ມງວດສົມຄວນ, ເຊິ່ງເປັນຂໍ້ມູນທີ່ດີໃຫ້ກັບທີມງານທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ໄດ້ຮຽກຮ້ອງໃຫ້ບັນດາພະແນກການຂອງແຂວງທີ່ກ່ຽວຂ້ອງນຳເອົາຄຳສະເໜີຕ່າງໆ ໄປປັບປຸງແກ້ໄຂຕໍ່ບົດລາຍງານຂອງຕົນ ສົ່ງໃຫ້ອົງການປົກຄອງແຂວງສັງລວມເປັນບົດລາຍງານສົ່ງໃຫ້ບັນດາກະຊວງທີ່ກ່ຽວຂ້ອງ ເພື່ອນຳເອົາຂໍ້ມູນດັ່ງກ່າວ, ນຳເຂົ້າຄົ້ນຄວ້າ, ພິຈາລະນາແກ້ໄຂ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້; ນອກນັ້ນ, ຍັງໃຫ້ສືບຕໍ່ໃນການຈັດຕັ້ງປະຕິບັດກົດໝາຍອື່ນໆພາຍໃນແຂວງ ໃຫ້ມີຄວາມເຂັ້ມງວດຂຶ້ນກວ່າເກົ່າ.

(ນາງ ວັນນີ ແຝງບົວວັນ)

## ເລື່ອງເດັ່ນ, ຂ່າວເດັດ

# ຄັດໂດຍ: ຫອມສະນິດ

❑ ລັດຖະບານ ຮ່ວມກັບອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປລາວ ແລະ ອົງການຮ່ວມມືສາກົນ ສ.ເກົາຫລີ (KOICA) ໄດ້ລົງນາມບົດບັນທຶກການປຶກສາຫາລື ແລະ ຂໍ້ຕົກລົງກ່ຽວກັບໂຄງການສະໜັບສະໜູນ ເພື່ອສ້າງຄວາມຍືນຍົງໃຫ້ແກ່ວຽກງານການແກ້ໄຂບັນຫາລະເບີດບໍ່ທັນແຕກ (ລບຕ) ທີ່ຕົກຄ້າງຢູ່ ສປປລາວ ເຊິ່ງໂຄງການດັ່ງກ່າວແມ່ນໄດ້ຮັບການສະໜັບສະໜູນຈາກລັດຖະບານ ສ.ເກົາຫລີ ໂດຍຜ່ານອົງການ KOICA ເປັນໄລຍະທີ 3 ມູນຄ່າ 11 ລ້ານໂດລາ ເພື່ອສະໜັບສະໜູນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ເພື່ອຊ່ວຍເຫລືອດ້ານມະນຸດສະທຳໃຫ້ແກ່ປະຊາຊົນລາວ ທີ່ດຳລົງຊີວິດໃນພື້ນທີ່ໆໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ.

**ນສພ. ປະເທດລາວ 10/05/2022**

❑ ນັບແຕ່ວັນທີ 9 ພຶດສະພາ 2022 ເປັນຕົ້ນມາ, ດ່ານສາກົນມິດຕະພາບລາວ-ໄທ ແຫ່ງທີ 1 ນະຄອນຫລວງວຽງຈັນ-ໜອງຄາຍ ໄດ້ເປີດໃຫ້ບໍລິການເດີນທາງເຂົ້າ-ອອກເປັນປົກກະຕິ ປັດຈຸບັນໄດ້ປະຕິບັດຕາມແຈ້ງການ ສະບັບເລກທີ 627/ສນຍ, ລົງວັນທີ 7 ພຶດສະພາ 2022 ໂດຍມີຜູ້ໂດຍສານເດີນທາງອອກ 944 ຄົນ ຍິງ 466 ຄົນ ເດັກ 15 ຄົນ ຜູ້ໂດຍສານເດີນທາງເຂົ້າ 868 ຄົນ ຍິງ 412 ຄົນ ແລະ ເດັກ 12 ຄົນ ມີພາຫະນະເຂົ້າ 148 ຄັນ, ລົດຕ່າງປະເທດ 291 ຄັນ; ປັດຈຸບັນ ຕມ ແມ່ນມີຄວາມພ້ອມທາງດ້ານບຸກຄະລາກອນດ້ານໄອທີ, ດ້ານການບໍລິການຈ້ຳແຈ້ງເອກະສານຂອງຜູ້ໂດຍສານຖືກຕ້ອງຕາມລະບຽບກົດໝາຍການເຂົ້າ-ອອກ ສປປລາວ ທີ່ໄດ້ກຳນົດໄວ້; ຄຽງຄູ່ກັນນັ້ນ, ກໍໄດ້ມີການປັບປຸງພື້ນຖານໂຄງລ່າງດ່ານ ເພື່ອຮອງຮັບການເພີ່ມຂຶ້ນຂອງຜູ້ໂດຍສານ ເຊິ່ງການເຂົ້າ-ອອກລາວໃນໄລຍະການລະບາດຂອງພະຍາດໂຄວິດ-19 ແມ່ນໄດ້ມີການຈັດຕັ້ງປະຕິບັດຕາມມາດຕະການຕ່າງໆທີ່ວາງອອກ.

**ນສພ. ວຽງຈັນໃໝ່ 12/05/2022**

❑ ນະຄອນຫລວງວຽງຈັນ ມີພື້ນຖານເພື່ອຮອງຮັບນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຊິ່ງມີສະຖານທີ່ພັກແຮມ 627 ແຫ່ງ, ຫ້ອງພັກ 16.382 ຫ້ອງ, ມີພັດຕະຄານຮ້ານອາຫານ ແລະ ສວນອາຫານ 139 ແຫ່ງ, ແຫລ່ງທ່ອງທ່ຽວ 86 ແຫ່ງ, ບໍລິສັດທ່ອງທ່ຽວ 344 ແຫ່ງ ແລະ ສະຖານບັນເທີງ 45 ແຫ່ງ, ມີລະບົບການຂົນສົ່ງມວນຊົນທີ່ເຊື່ອມຈອດກັບບັນດາດ່ານສາກົນ ແລະ ສະຖານີຂົນສົ່ງໂດຍສານສາຍເໜືອ-ສາຍໃຕ້ ແລະ ສາຍຕ່າງປະເທດ; ນອກນີ້, ຄະນະຮັບຜິດຊອບວຽກງານຕ້ານໂຄວິດ-19 ຢູ່ນະຄອນຫລວງຍັງໄດ້ຮັບຮອງເອົາໂຮງແຮມເປັນສະຖານທີ່ຈຳກັດບໍລິເວນ 50 ແຫ່ງ ແລະ ຮັບຮອງໂຮງແຮມ ແລະ ເຮືອນພັກ ເພື່ອກຳນົດເປັນສະຖານທີ່ຈຳກັດບໍລິເວນສຳລັບຜູ້ມີຜົນບວກບໍ່ມີອາການສະແດງ ແລະ ບໍ່ມີຄວາມສ່ຽງດ້ານສຸຂະພາບອື່ນໆ 8 ແຫ່ງ ສຳລັບຕົວເລກນັກທ່ອງທ່ຽວເຂົ້າມາພາຍໃຕ້ໂຄງການທ່ອງທ່ຽວສີຂຽວ ຮອດເດືອນເມສາ ມີຈຳນວນ 1.251 ຄົນ.

**ນສພ. ວຽງຈັນໃໝ່ 12/05/2022**

❑ ບໍລິສັດ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ (ລນລ) ໄດ້ເຊັນສັນຍາຊື້-ຂາຍນ້ຳມັນກາຊວນ 10 ລ້ານລິດ/ເດືອນ ກັບໂຮງງານປຸງແຕ່ງນ້ຳມັນເຊື້ອໄຟຍອດງື່ມພາວເວີ ຈຳກັດ ຄາດວ່າຈະອອກຈຳໜ່າຍສູ່ສັງຄົມໃນທ້າຍເດືອນພຶດສະພາ 2022 ນີ້.

**ນສພ. ປະຊາຊົນ 13/05/2022**



## ພິທີ...

(ສພຊ) ວັນທີ 15 ພຶດສະພາ 2022 ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະຫາຍ ເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍການນຳຂັ້ນສູງ ຂອງສອງສະພາແຫ່ງຊາດລາວ-ຫວຽດນາມ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມພິທີເປີດໂຄງການສວນສາທາລະນະມິດຕະພາບ ລາວ-ຫວຽດນາມ ທີ່ບ້ານດົງໝາກຄາຍ ເມືອງໄຊທານີ ນະຄອນຫລວງວຽງຈັນ ເຊິ່ງໂຄງການດັ່ງກ່າວ ເປັນໂຄງການໜຶ່ງທີ່ມີຄວາມໝາຍສຳຄັນພິເສດ ພາຍໃຕ້ການຊີ້ນຳໂດຍກົງຂອງສອງກົມການເມືອງສູນກາງພັກ ລາວ-ຫວຽດນາມ.

ຕາງໜ້າເຈົ້າຂອງໂຄງການຝ່າຍລາວ ແລະ ຫວຽດນາມ ໄດ້ຜັດປ່ຽນກັນມີຄຳເຫັນ ໂດຍສະຫາຍ ທອງສະລິດ ມັງໜໍ່ເມກ ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກກ່າວວ່າ: ໂຄງການກໍ່ສ້າງສວນສາທາລະນະມິດຕະພາບ ລາວ-ຫວຽດນາມ ເປັນໂຄງການໜຶ່ງທີ່ມີຄວາມໝາຍສຳຄັນພິເສດໂດຍພາຍໃຕ້ການຊີ້ນຳໂດຍກົງຂອງສອງກົມການເມືອງສູນກາງພັກ ລາວ-ຫວຽດນາມ, ເປັນໂຄງການທີ່ມີຄວາມໝາຍທາງປະຫວັດສາດ-ການເມືອງ ຢ່າງເລິກເຊິ່ງລະຫວ່າງສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ເປັນສັນຍາລັກແຫ່ງການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການພົວພັນຮ່ວມມືຮອບດ້ານຂອງສອງຊາດ.

ໂຄງການດັ່ງກ່າວ, ມີເນື້ອທີ່ທັງໝົດ 3 ເຮັກຕາ ຕັ້ງຢູ່ເຂດນະຄອນຫລວງວຽງຈັນ ເຊິ່ງບັນດາເນື້ອໃນ, ກິດຈະການຕ່າງໆ ທີ່ຈະປະກອບເຂົ້າໃນໂຄງການແມ່ນລ້ວນແລ້ວແຕ່ສ່ອງແສງໃຫ້ເຫັນເອກະລັກ, ວັດທະນະທຳ, ມູນເຊື້ອອັນດີງາມຂອງການພົວພັນລະຫວ່າງສອງຊາດ. ພາຍຫລັງສຳເລັດສະຖານທີ່ດັ່ງກ່າວ ຈະກາຍເປັນບ່ອນພັກຜ່ອນ, ອອກກຳລັງກາຍ, ທ່ອງທ່ຽວທາງດ້ານວັດທະນະທຳ, ສະຖານທີ່ສຶກສາ, ຮໍ່າຮຽນ ຂອງປະຊາຊົນລາວເວົ້າລວມ ເວົ້າສະເພາະແມ່ນຂອງຊາວນະຄອນຫລວງວຽງຈັນ ໄດ້ເຂົ້າມາທັດສະນະສຶກສາ, ຄົ້ນຄວ້າ, ເຄື່ອນໄຫວກິດຈະກຳເສີມຂະຫຍາຍມູນເຊື້ອອັນດີງາມຂອງສອງພັກ-ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ. ລາວ ແລະ ຫວຽດນາມ ແມ່ນສອງປະເທດບ້ານໃກ້ເຮືອນຄຽງທີ່ມີຊາຍແດນຕິດຈອດກັນແຕ່ເໜືອຮອດໃຕ້, ມີຄວາມໃກ້ຊິດ ສະໜິດສະໜົມ, ມີສາຍພົວພັນມິດຕະພາບ ອັນເປັນມູນເຊື້ອມາແຕ່ບູຮານນະການ ແລະ ໄດ້ກາຍມາເປັນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ເຊິ່ງເປັນແບບຢ່າງ ທີ່ຫາຍາກຂອງການພົວພັນສາກົນໃນໂລກນີ້ "ແບບໜຶ່ງບໍ່ມີສອງ" ໂດຍແມ່ນປະທານ ໄກສອນ ພົມວິຫານ ປະທານ ສຸພານຸວົງ ແລະ ປະທານ ໂຮ່ ຈີ່ ມິງ ເປັນຜູ້ລິເລີ່ມ ແລະ ເພີ່ມພູນຄູນສ້າງ ກາຍເປັນມໍລະດົກອັນປະເສີດ ແລະ ລ້ຳຄ່າ ທີ່ຕ້ອງໄດ້ຖະນຸຖະໜອມ ແລະ ສືບທອດມາຈົນເຖິງທຸກວັນນີ້. ກ້າວເຂົ້າສູ່ໄລຍະໃໝ່ແຫ່ງການພົວພັນແບບພິເສດນີ້ ຍິ່ງໄດ້ຮັບການສືບຕໍ່ປັບປຸງ ແລະ ເສີມຂະຫຍາຍຂຶ້ນສູ່ລະດັບສູງກວ່າເກົ່າ ປະກອບສ່ວນເຂົ້າໃນການປະຕິບັດບັນດາໜ້າທີ່ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຊິ່ງສອງພັກ-ສອງລັດ ໄດ້ວາງອອກຢ່າງມີໄຊ ເຮັດໃຫ້ ສປປລາວ ແລະ ສສ.ຫວຽດນາມ ໄດ້ຮັບການພັດທະນາ, ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ໂລກ ຢ່າງບໍ່ຢຸດຢັ້ງ.

# ຄະນະຜູ້ແທນ ສພຊ ລາວ ເຂົ້າຮ່ວມ ກອງປະຊຸມສຳມະນາກ່ຽວກັບການຄ້າສາກົນ

(ສພຊ) ໃນລະຫວ່າງວັນທີ 10-12 ພຶດສະພາ 2022 ຄະນະຜູ້ແທນສະພາແຫ່ງຊາດ (ສພຊ) ລາວ ນຳໂດຍທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາ ກ່ຽວກັບການຄ້າສາກົນໃຫ້ແກ່ສະມາຊິກລັດຖະສະພາ ປະຈຳປີ 2022 (IRSIS-WTO Virtual Parliamentarian Workshop on International Trade 2022) ໃນຮູບແບບທາງໄກ.



ທັງນີ້, ກໍເພື່ອເປັນການເປີດໂອກາດໃຫ້ບັນດາສະມາຊິກສະພາແຫ່ງຊາດ ໄດ້ເພີ່ມທະວີຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບນະໂຍບາຍການຄ້າສາກົນຂອງອົງການການຄ້າໂລກ ທີ່ ສປປລາວ ໄດ້ເຂົ້າເປັນສະມາຊິກໃນປີ 2013. ນອກນັ້ນ, ຍັງເປັນການເພີ່ມທະວີຄວາມຮູ້ ແລະ ແລກປ່ຽນປະສົບການຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບການຄົ້ນຄວ້າ, ພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນທາງດ້ານການຄ້າ ແລະ ວຽກງານຕິດຕາມກວດກາ ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາສົນທິສັນຍາ ແລະ ສັນຍາສາກົນທາງດ້ານການຄ້າຢູ່ພາຍໃນປະເທດ.

ກອງປະຊຸມສຳມະນາດັ່ງກ່າວ, ໄດ້ຈັດຂຶ້ນພາຍໃຕ້ການຮ່ວມມືກັນລະຫວ່າງອົງການການຄ້າໂລກ (World Trade Organization), ສະຖາບັນພົວພັນສາກົນ ຣາຈາຣັດມັນ (RSIS) ແຫ່ງປະເທດສິງກະໂປ ແລະ ມູນນິທິສາກົນ ເທມາເສກ (The Temasak Foundation International) ໂດຍມີຈຸດປະສົງເພື່ອເພີ່ມທະວີຄວາມສາມາດໃຫ້ແກ່ສະມາຊິກລັດຖະສະພາ ຫລາຍກວ່າ 40 ປະເທດ ຈາກພາກພື້ນອາຊີ ແລະ ໝູ່ເກາະປາຊີຟິກ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ບັນຫາການຄ້າສາກົນເວົ້າລວມ, ເວົ້າສະເພາະແມ່ນຕໍ່ກັບວຽກງານຂອງອົງການການຄ້າໂລກ ຫລື WTO ແລະ ການເຈລະຈາ ບັນຫາກ່ຽວກັບການຄ້າສາກົນທີ່ມີຢູ່ໃນປັດຈຸບັນ ແລະ ອາດເກີດຂຶ້ນໃນອະນາຄົດ; ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດຮຽນທີ່ດີກ່ຽວກັບເສດຖະກິດໂລກ ໃນການຈັດຕັ້ງປະຕິບັດບັນດາສົນທິສັນຍາ ແລະ ສັນຍາສາກົນຂອງປະເທດສະມາຊິກ; ນອກນັ້ນ, ຍັງໄດ້ປຶກສາຫາລືກ່ຽວກັບເສດຖະກິດໂລກ ຫລັງການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ໃນຍຸກທີ່ພົວພັນເຖິງບັນຫາດິນຟ້າອາກາດ.

(ກົງທະນູຄຳ ພິພັດເສລີ)





## ຮອງປະທານ...

ກູບາ ທີ່ໄດ້ມອບໜ້າທີ່ໃຫ້ມາເຮັດໜ້າທີ່ເປັນເອກອັກຄະລັດຖະທູດປະຈຳ ສປປລາວ ຄັ້ງນີ້ ພ້ອມທັງຕີລາຄາສູງຕໍ່ການມາປະຕິບັດໜ້າທີ່ໃນຄັ້ງນີ້ ເພື່ອເປັນການສືບຕໍ່ຮັກສາມູນເຊື້ອສາຍພົວພັນອັນດີງາມທີ່ສອງພັກ, ສອງລັດ ລາວ-ກູບາ ທີ່ໄດ້ສ້າງມາໃຫ້ຍິ່ງຂຶ້ນກວ່າເກົ່າ ແລະ ກ່າວສະແດງຄວາມຂອບໃຈຕໍ່ການຊ່ວຍເຫລືອຂອງພັກ, ລັດຖະບານກູບາທີ່ໄດ້ຊ່ວຍເຫລືອ ສປປລາວ ໃນໄລຍະຜ່ານມາ ກໍຄືປັດຈຸບັນ ບໍ່ວ່າຈະເປັນທາງດ້ານກະສິກຳ, ທາງດ້ານສາທາ ແລະ ດ້ານອື່ນໆ ພ້ອມທັງແຈ້ງໃຫ້ຮູ້ກ່ຽວກັບຄວາມເປັນມາຂອງສະມາຄົມມິດຕະພາບລາວ-ກູບາ ໂດຍສັງເຂບ.

ຕອນທ້າຍ, ທ່ານ ນາງ Enna Esther Viant Valdes ໄດ້ກ່າວສະແດງຄວາມຂອບໃຈທີ່ຮອງປະທານສະພາແຫ່ງຊາດ ທີ່ໄດ້ເສຍສະຫລະເວລາອັນມີຄຸນຄ່າໃຫ້ການຕ້ອນຮັບ ແລະ ເຫັນດີຕໍ່ຄຳຄິດຄຳເຫັນທີ່ຮອງປະທານສະພາແຫ່ງຊາດໄດ້ກ່າວມາ ແລະ ພ້ອມທີ່ຈະປະຕິບັດໜ້າທີ່ໃນຖານະນັກການທູດໃຫ້ດີທີ່ສຸດ ພ້ອມທັງແຈ້ງໃຫ້ຮູ້ກ່ຽວກັບແຜນການຊ່ວຍເຫລືອໃນອະນາຄົດແມ່ນຈະສຸມໃສ່ຂົງເຂດການສຶກສາ ແລະ ໃຫ້ແຈ້ງໃຫ້ຮູ້ອີກວ່າ: ໃນອະນາຄົດໃກ້ໆນີ້ ປະທານປະເທດກູບາ ແລະ ສະມາຄົມກູບາ-ລາວ ຈະມອບຫລຽນໄຊ ແລະ ໃບຍ້ອງຍໍໃຫ້ແກ່ສະມາຄົມມິດຕະພາບລາວ-ກູບາ.

(ສອນສັກ ວັນວິໄຊ)

## ກສຕສ...

ພົນປະສານງານ ແລະ ເຮັດວຽກຮ່ວມກັນ ຢ່າງໃກ້ຊິດມາໂດຍຕະຫລອດ ໂດຍສະເພາະການຄົ້ນຄວ້າໂຄງການລົງທຶນໃນຂົງເຂດພະລັງງານ ແລະ ບໍ່ແຮ່ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແຕ່ກໍຍັງບໍ່ທັນມີນິຕິກຳໂດຍສະເພາະທີ່ເປັນບ່ອນອີງໃນການພົວພັນປະສານງານເຊິ່ງກັນແລະກັນ ຂໍ້ຕົກລົງສະບັບນີ້ແມ່ນໄດ້ກຳກ່ຽວກັບຫລັກການ, ຂອບເຂດ, ລະບຽບການ, ຂັ້ນຕອນ, ວິທີການປະສານງານລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ກັບກະຊວງພະລັງງານ ແລະ ບໍ່ແຮ່ ໃນການຄົ້ນຄວ້າ, ປຶກສາຫາລື, ສະໜອງ ແລະ ແລກປ່ຽນຂໍ້ມູນ, ຂ່າວສານ ໃນການກະກຽມເນື້ອໃນກອງປະຊຸມຂອງສະພາແຫ່ງຊາດ (ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ) ທີ່ຕິດພັນກັບວຽກງານພະລັງງານ ແລະ ບໍ່ແຮ່ ເຊິ່ງຈະເປັນການປະກອບສ່ວນອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ລັດຖະບານ ຕາມພາລະບົດບາດ, ໜ້າທີ່ ແລະ ສິດຂອງຕົນ ແນໃສ່ຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ໃນການປະຕິບັດໜ້າທີ່ໃຫ້ມີປະສິດທິພາບ, ປະສິດທິຜົນ, ວ່ອງໄວ, ຮັດກຸມ ແລະ ທັນເວລາ ພ້ອມກັນນັ້ນ, ຂໍ້ຕົກລົງດັ່ງກ່າວ ຍັງຈະເປັນເຄື່ອງມືໜຶ່ງປະກອບສ່ວນຊ່ວຍໃນການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານ-ລັດຖະກອນຂອງກຳມາທິການ ແລະ ກະຊວງດັ່ງກ່າວ ໃຫ້ມີຄວາມໃກ້ຊິດສະໜິດສະໜົມ ແລະ ເພີ່ມຄວາມສາມັກຄີຮັກແພງລະຫວ່າງສອງພາກສ່ວນໃຫ້ຫລາຍຂຶ້ນກວ່າເກົ່າ.

ກອງປະຊຸມດັ່ງກ່າວ ຈັດຂຶ້ນໃນວັນທີ 9 ພຶດສະພາຜ່ານມາ, ທີ່ກະຊວງພະລັງງານ ແລະ ບໍ່ແຮ່ ຕາງໜ້າເຊັນຂໍ້ຕົກລົງໂດຍແມ່ນທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ແລະ ທ່ານ ປອ. ດາວວົງ ພອນແກ້ວ ກຳມະການສູນກາງພັກ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ມີບັນດາທ່ານຄະນະນຳ ແລະ ພະນັກງານວິຊາການຈາກສອງພາກສ່ວນເຂົ້າຮ່ວມເປັນສັກຂີພິຍານ.

(ສອນສັກ ວັນວິໄຊ)

# ອົບຮົມສ້າງຄວາມເຂັ້ມແຂງໃຫ້ພະນັກງານ ສພຂ ອຸດົມໄຊ

(ສພຊ) ຕອນບ່າຍຂອງວັນພະຫັດວັນທີ 12 ພຶດສະພາ 2022 ຢູ່ທີ່ສະໂມສອນເມືອງນາໝໍ້ ແຂວງອຸດົມໄຊ, ສະພາປະຊາຊົນແຂວງອຸດົມໄຊ ໄດ້ສຳເລັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຊ່ວຍວຽກ ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ກຳມະການປະຈຳພັກແຂວງ, ຮອງປະທານ ສພຂ, ມີທ່ານ ນາງ ບົວພອນ ແກ້ວມະນີ ຮອງເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງນາໝໍ້, ມີກຳມະການປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ພະນັກງານວິຊາການຈາກສະພາແຫ່ງຊາດ ຜູ້ຕາງໜ້າອົງການເຊກາ (CEGGA), ວິທະຍາກອນຈາກພະແນກພາຍໃນແຂວງ, ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 7 ເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.




ກອງປະຊຸມໃນຄັ້ງນີ້ ໄດ້ດຳເນີນມາເປັນເວລາ 3 ວັນ, ດ້ວຍບັນຍາກາດທີ່ຟົດຟື້ນ, ບັນດາທ່ານວິທະຍາກອນ ແລະ ສຳມະນາກອນ ໄດ້ຖ່າຍທອດບັນດາຄວາມຮູ້, ວິທີການ-ຮູບແບບ ແລະ ສົນທະນາ-ແລກປ່ຽນຄຳຄິດເຫັນເຊິ່ງກັນແລະກັນ ຢ່າງກົງໄປກົງມາ; ອັນພົ້ນເດັ່ນແມ່ນກອງປະຊຸມໄດ້ເຝິກບັນດາຫົວຂໍ້ ແລະ ເນື້ອໃນສຳຄັນ ຄື: ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ; ຂໍ້ຕົກລົງຮ່ວມລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ; ເຕັກນິກການເປັນພິທີກອນ ຫລື ຄະນະຈັດຕັ້ງພິທີການ; ວິທີຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ການແຕ່ງເອກະສານທາງການ ແລະ ການນຳໃຊ້ຄອມພິວເຕີເຂົ້າໃນວຽກງານທາງລັດຖະການ.

ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງຄັ້ງນີ້ ເປັນການສືບຕໍ່ໃນການຈັດຕັ້ງປະຕິບັດວຽກງານການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ ປະຈຳເຂດເລືອກຕັ້ງເມືອງ ຕາມແຜນການເຄື່ອນໄຫວ 5 ປີ (2021-2025) ຂອງສະພາປະຊາຊົນແຂວງ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ ປະຈຳເຂດເລືອກຕັ້ງເມືອງ, ທັງນີ້ແມ່ນເພື່ອຮັບປະກັນໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກຂັ້ນເມືອງ ມີຄວາມຮັບຮູ້, ເຂົ້າໃຈຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ; ຮັບປະກັນການເປັນເສນາທິການທີ່ດີ ແລະ ເກັ່ງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ກໍຄືການເປັນເສນາທິການຊ່ວຍວຽກງານຂອງສະພາປະຊາຊົນແຂວງ ໄດ້ຮັບປະສິດທິຜົນ-ມີຄຸນນະພາບ ແລະ ສຳເລັດຕາມຄາດໝາຍໃນແຕ່ລະໄລຍະ.



ໃນຕອນທ້າຍປະທານກອງປະຊຸມໄດ້ຮຽກຮ້ອງໃຫ້ຍັງພະນັກງານສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກປະຈຳເຂດເລືອກຕັ້ງ 7 ເມືອງ ຈົ່ງນຳເອົາເນື້ອ ແລະ ບົດຮຽນໃນການເຝິກອົບຮົມຄັ້ງນີ້ ໄປນຳໃຊ້-ໝູນໃຊ້ເຂົ້າໃນການເຄື່ອນໄຫວວຽກງານທີ່ຕົນຮັບຜິດຊອບໃນແຕ່ລະໄລຍະໃຫ້ປະສົບກັບຜົນສຳເລັດເປັນຢ່າງດີ; ທ່ານຍັງໄດ້ສະແດງຄວາມຂອບໃຈ ຕໍ່ອົງການເຊກາ (CEGGA) ທີ່ໄດ້ໃຫ້ທຶນໃນການຈັດກອງປະຊຸມເຝິກອົບຮົມຄັ້ງນີ້, ຫວັງຢ່າງຍິ່ງວ່າອົງການດັ່ງກ່າວ ຍັງຈະສືບຕໍ່ໃຫ້ທຶນແກ່ພວກເຮົາອີກໃນອະນາຄົດ.

(ແສງພອນ ອິນນະລົງ)

# ກອງປະຊຸມທາບທາມ ຮ່າງກົດໝາຍຈຳນວນ 5 ສະບັບ



(ສພຊ) ກອງປະຊຸມທາບທາມຮ່າງກົດໝາຍຈຳນວນ 5 ສະບັບລະບົບເຊິ່ງໜ້າ ແລະ ທາງໄກ ໄດ້ຈັດຂຶ້ນໃນວັນທີ 12 ພຶດສະພາ 2022 ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ; ເຂົ້າຮ່ວມກອງປະຊຸມຄັ້ງນີ້ ມີບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ມີຫົວໜ້າ-ຮອງຫົວໜ້າພະແນກການກົມກອງອົງການອ້ອມຂ້າງແຂວງ, ມີເຈົ້າເມືອງ-ຮອງເຈົ້າເມືອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໂດຍປະຕິບັດຄຳແນະນຳຂອງກຳມາທິການກົດໝາຍສະພາແຫ່ງຊາດ ສະບັບລົງວັນທີ 3 ພຶດສະພາ 2022 ແລະ ແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ສະບັບເລກທີ 185/ຄລສກໜ, ລົງວັນທີ 5 ພຶດສະພາ 2022 ດັ່ງນັ້ນ ກອງປະຊຸມໃນຄັ້ງນີ້ ບັນດາຜູ້ເຂົ້າຮ່ວມແບບເຊິ່ງໜ້າ ແລະ ທາງໄກຈະໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບຄື: ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.

ຈຸດປະສົງກໍເພື່ອເຮັດໃຫ້ບັນດາຮ່າງກົດໝາຍ 5 ສະບັບຖືກຕ້ອງສອດຄ່ອງຕາມຫລັກການລະບຽບການ ແລະ ມາດຕະການຈັດຕັ້ງປະຕິບັດເຄື່ອນໄຫວໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ປະກອບສ່ວນເຂົ້າໃນການປົກປັກຮັກສາພັດທະນາປະເທດຊາດ.

(ອິນທີ ຂຽວສີຟ້າ)



# ທາບທາມປະກອບຄຳຄິດຄຳເຫັນ ໃສ່ຮ່າງນິຕິກຳຮ່ວມກັບອົງການປົກຄອງແຂວງຄຳມ່ວນ

(ສພຊ) ກອງປະຊຸມທາບທາມປະກອບຄຳຄິດຄຳເຫັນໃສ່ຮ່າງນິຕິກຳຮ່ວມ ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນອັງຄານ ວັນທີ 10 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງ, ຫົວໜ້າຄະນະຮັບຜິດຊອບກວດກາ, ສ້າງ ແລະ ປັບປຸງນິຕິກຳ, ມີບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ກອງເລຂາຊ່ວຍວຽກເຂົ້າຮ່ວມ.



ນິຕິກຳທີ່ນຳເຂົ້າທາບທາມໃນກອງປະຊຸມຄັ້ງນີ້ ມີຈຳນວນ 6 ສະບັບຄື: ຮ່າງບົດບັນທຶກການປະສານງານລະຫວ່າງສະພາປະຊາຊົນແຂວງຄຳມ່ວນກັບອົງການປົກຄອງແຂວງຄຳມ່ວນ; ຮ່າງບົດບັນທຶກການປະສານງານລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ກັບຫ້ອງວ່າການແຂວງຄຳມ່ວນ; ຮ່າງບົດບັນທຶກການປະສານງານລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບ 4 ພະແນກການຄື: ພະແນກສຶກສາທິການ ແລະ ກິລາ, ພະແນກສາທາລະນະສຸກ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແລະ ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ.

(ນັກຂ່າວ ສພຂ ຄຳມ່ວນ)

# ສະພາປະຊາຊົນແຂວງບໍລິຄຳໄຊ ທາບທາມຮ່າງກົດໝາຍຈຳນວນ 3 ສະບັບ

(ສພຊ) ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍຈຳນວນ 3 ສະບັບຄື: ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີເນື້ອໃນຮັດກຸມ, ຈະແຈ້ງ, ຄົບຖ້ວນ, ສົມບູນ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມຫລັກວິທະຍາສາດຂອງການສ້າງກົດໝາຍໃຫ້ສອດຄ່ອງ, ແທດເໝາະກັບສະພາບຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ.



ໃນຕອນເຊົ້າຂອງວັນທີ 13 ພຶດສະພາ 2022 ທີ່ສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ຈັດກອງປະຊຸມປະກອບຄຳຄິດ-ຄຳເຫັນ ຕໍ່ຮ່າງກົດໝາຍຈຳນວນ 3 ສະບັບຄື: ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍການເປັນປະທານຂອງທ່ານ ສີສະຫວາດ ທັນທະບຸນ ປະທານ

ອ່ານຕໍ່ໜ້າ 5...

# ສະພາປະຊາຊົນແຂວງອັດຕະປື ເຊັນບົດບັນທຶກການປະສານງານ ກັບ 3 ພາກສ່ວນ



(ສພຊ) ໃນຕອນເຊົ້າ ຂອງວັນທີ 13 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໄດ້ຈັດພິທີເຊັນບົດບັນທຶກການປະສານງານ ລະຫວ່າງຄະນະກຳມະການເສດຖະກິດ, ແຜນການ ແລະການເງິນ (ຄສຜງ) ສພຂ ກັບອົງການກວດກາລັດແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ ພະແນກການເງິນແຂວງ; ເຂົ້າຮ່ວມໂດຍທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານ ສພຂ, ເຊິ່ງຕາງໜ້າເຊັນບົດບັນທຶກໂດຍແມ່ນທ່ານ ສຸກສຳລານ ໄຊຍະແສງ ຮອງປະທານ ສພຂ, ປະທານ ຄສຜງ ແລະ ທ່ານ ຄຳຫວັນ ຈັນທະໂຄດ ປະທານອົງການກວດກາລັດແຂວງ, ທ່ານ ສູນນະຄອນ ແກ້ວວຽງຄຳ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ແລະ ທ່ານ ຄຳເຜີຍ ໂສມຖາວອນ ຫົວໜ້າພະແນກການເງິນແຂວງ, ມີບັນດາທ່ານຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

ບົດບັນທຶກການປະສານງານ ລະຫວ່າງ ຄສຜງ ກັບ ອົງການກວດກາລັດແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ ພະແນກການເງິນແຂວງ ເຊິ່ງຖືວ່າເປັນບົດບັນທຶກຮ່ວມສະບັບທຳອິດ ທີ່ຄະນະກຳມະການ ແລະ ພາກສ່ວນດັ່ງກ່າວ ໄດ້ລົງລາຍເຊັນຮ່ວມເປັນລາຍລັກອັກສອນ ເຖິງວ່າໄລຍະຜ່ານມາໄດ້ມີການພົວພັນປະສານງານ ແລະ ເຮັດວຽກຮ່ວມກັນ ຢ່າງໃກ້ຊິດມາໂດຍຕະຫລອດແຕ່ກໍຍັງບໍ່ທັນມີນິຕິກຳສະເພາະທີ່ເປັນບ່ອນອີງ ໃນການພົວພັນປະສານງານເຊິ່ງກັນແລະກັນ, ບົດບັນທຶກ 3 ພາກສ່ວນ ແມ່ນໄດ້ກຳນົດຫລັກການ, ຂັ້ນຕອນ, ລະບຽບການ ແລະ ວິທີການປະສານງານ ແນໃສ່ການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດໃນການແກ້ໄຂຜົນການກວດສອບໃຫ້ມີຄວາມຖືກຕ້ອງ, ເປັນທຳ ສາມາດເກັບກູ້ຜົນເສຍຫາຍທາງດ້ານຊັບສິນຂອງລັດຄືນຢ່າງຄົບຖ້ວນ, ຄົ້ນຄວ້າປຶກສາຫາລື, ແລກປ່ຽນຂໍ້ມູນຂ່າວສານການເຄື່ອນໄຫວງົບປະມານແຫ່ງລັດ ເພື່ອຮັບປະກັນເຮັດໃຫ້ຂະບວນການສ້າງ, ສະຫລຸບ, ການຄຸ້ມຄອງ, ຕິດຕາມກວດກາ, ຊຸກຍູ້ ສົ່ງເສີມການຈັດຕັ້ງປະຕິບັດກົດໝາຍ, ການອອກນິຕິກຳໃຕ້ກົດໝາຍ, ການລາຍງານສະພາບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ການສ້າງແຜນການລົງທຶນຂອງແຂວງ ລາຍງານຕໍ່ ສພຂ ໃນແຕ່ລະໄລຍະມີຄວາມໂປ່ງໃສ, ເນັ້ນຄຸນນະພາບ ແລະ ທັນຕາມກຳນົດເວລາ.

(ວິນັດ ສີສຸລາດ)


ຕໍ່ຈາກໜ້າ 4...

ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ພະແນກການທີ່ກ່ຽວຂ້ອງ ແລະ ວິສາຫະກິດພາຍໃນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການນຳສະເໜີເນື້ອໃນການຄົ້ນຄວ້າປັບປຸງກົດໝາຍຈຳນວນ 3 ສະບັບດັ່ງກ່າວ ແລະ ໄດ້ໃຫ້ທິດຊີ້ນຳໃນການຄົ້ນຄວ້າຈາກທ່ານປະທານກອງປະຊຸມ; ຫລັງຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດ-ຄຳເຫັນໃສ່ບັນດາຮ່າງກົດໝາຍດ້ວຍຄວາມເປັນເຈົ້າການສູງ, ມີຄວາມເປັນເອກະພາບ ແນໃສ່ເຮັດໃຫ້ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ມີຜົນສັກສິດ, ໂປ່ງໃສ ແລະ ຍຸຕິທຳໃນສັງຄົມ.

(ນັກຂ່າວ ສພຂ ບໍລິຄຳໄຊ)




# ສຳເລັດກອງປະຊຸມ ສ້າງຄວາມເຂັ້ມແຂງໃຫ້ ສສຂ ສາລະວັນ



(ສພຊ) ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານ ທີ່ສັງກັດຢູ່ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ (ຄສຜງ) ໄດ້ອັດລົງດ້ວຍຜົນສຳເລັດຕາມແຜນທີ່ວາງໄວ້ ພາຍຫລັງດຳເນີນມາເປັນເວລາ 2 ວັນ ເລີ່ມແຕ່ວັນທີ 9-10 ພຶດສະພາ 2022 ທີ່ສະໂມສອນຂອງເມືອງເລົ່າງາມ ແຂວງສາລະວັນ ໂດຍການເປັນປະທານປິດກອງປະຊຸມເຝິກອົບຮົມຂອງທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ; ເຂົ້າຮ່ວມມີຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ຜູ້ປະສານງານໂຄງການ, ສສຂ ແລະ ພະນັກງານ ທີ່ສັງກັດຢູ່ ຄສຜງ, ມີຄູເຝິກວິທະຍາກອນຈາກສູນກາງ ແລະ ພາຍໃນແຂວງເຂົ້າຮ່ວມໃນຄັ້ງນີ້.

ກອງປະຊຸມອົບຮົມດັ່ງກ່າວ ສຳມະນາກອນ ໄດ້ຮັບຟັງບົດຮຽນໃນການຈັດກອງປະຊຸມຮູບແບບທາງໄກ ຈາກທ່ານ ປອ. ສາຍທອງ ພົມມະວົງ ຮອງຫົວໜ້າກົມການເງິນ, ການທະນາຄານ ແລະ ການກວດສອບ ໃນບົດຮຽນກ່ຽວກັບການຕິດຕາມກວດກາແຜນງົບປະມານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ທັງເຝິກຕົວຈິງແບບເຊິ່ງໜ້າ ໃນບົດຮຽນການຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບບັນດາຄາດໝາຍມະຫາພາກ, ການຈັດສັນງົບປະມານ ແລະ ການລົງທຶນໃນຂົງເຂດເສດຖະກິດ; ບົດຮຽນຂະບວນການສ້າງແຜນການລົງທຶນຂັ້ນແຂວງ ປະຈຳປີ ຈາກທ່ານ ບຸນລົມ ອິນສຸທາ ຮອງຫົວໜ້າພະແນກ ແຜນການ ແລະ ການລົງທຶນແຂວງ; ບົດຮຽນການພິຈາລະນາຮັບຮອງເອົາແຜນການລົງທຶນຂອງ ສພຂ ຈາກທ່ານ ສາຍສະໝອນ ອິນທິເສນ ປະທານ ຄສຜງ; ບົດຮຽນວິທີການຄິດໄລ່ລວມຍອດຜະລິດຕະພັນພາຍໃນ (GDP) ແລະ ການຄິດໄລ່ລວມຍອດລາຍໄດ້ແຫ່ງຊາດ (GIN) ຈາກທ່ານ ຄຳກິ່ງ ແກ້ວສຸພັນ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ; ໃນວາລະບັນດານັກສຳມະນາກອນ ກໍຍັງໄດ້ປະກອບຄຳເຫັນແລກປ່ຽນບົດຮຽນໃນແຕ່ລະຫົວຂໍ້ຕ່າງໆຢ່າງສ້າງສັນ ແລະ ກົງໄປກົງມາ ທີ່ຕິດພັນກັບໜ້າທີ່ການເມືອງຂອງແຕ່ລະພາກສ່ວນ; ຈາກນັ້ນ, ກໍຍັງໄດ້ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 89/ຄຈສຂ.ສວ, ລົງວັນທີ 23 ສິງຫາ 2021 ກ່ຽວກັບການຈັດຕັ້ງການເຄື່ອນໄຫວຂອງ ຄສຜງ ຕື່ມອີກ.

ນອກນັ້ນ, ກອງປະຊຸມຍັງໄດ້ຄົ້ນຄວ້າ, ແລກປ່ຽນ ແລະ ປະກອບຄຳຄິດຄຳເຫັນບົນພື້ນຖານຄວາມເປັນເອກະພາບເຂົ້າໃສ່ຮ່າງຂໍ້ຕົກລົງ ວ່າດ້ວຍກົນໄກການພົວພັນປະສານງານລະຫວ່າງ ຄສຜງ ກັບບັນດາພະແນກການທີ່ກ່ຽວຂ້ອງ ເຊິ່ງປະກອບມີ 2 ພາກ, 3 ໝວດ, 18 ມາດຕາ ເຊິ່ງແນໃສ່ໃຫ້ເນື້ອໃນຄົບຖ້ວນ, ສົມບູນ ແລະ ເຫດເໝາະກັບສະພາບຄວາມເປັນຈິງໃນການຈັດຕັ້ງປະຕິບັດຂະບວນການພົວພັນປະສານງານໃຫ້ມີຄວາມໂລ່ງລ່ຽນ ແລະ ມີປະສິດທິພາບສູງ ຮອງຮັບໃຫ້ແກ່ວຽກງານຂອງ ສພຂ ທີ່ຈະຈັດກອງປະຊຸມສະໄໝສາມັນໃນແຕ່ລະຄັ້ງ.

ຕອນທ້າຍກອງປະຊຸມ, ກໍໄດ້ຮັບຟັງການໂອລົມຈາກທ່ານ ນາງ ສູນໄຖ ໄຊຍະແສງ ເຊິ່ງທ່ານໄດ້ກ່າວວ່າ: ເພື່ອເຮັດໃຫ້ເນື້ອໃນຈິດໃຈຂອງກອງປະຊຸມເຝິກອົບຮົມໃນຄັ້ງນີ້ ບັນລຸຕາມຈຸດປະສົງ ແລະ ຄາດໝາຍ ຮຽກຮ້ອງໃຫ້ນັກສຳມະນາກອນ ກໍຄືບັນດາທ່ານ ສສຂ ແລະ ພະນັກງານ ທີ່ສັງກັດຢູ່ໃນ ຄສຜງ ຈົ່ງຍົກສູງຄວາມຮັບຜິດຊອບໃນພາລະບົດບາດໜ້າທີ່ການເມືອງຂອງຕົນ ນຳເອົາເນື້ອໃນຈິດໃຈ ບົດຮຽນທີ່ມີຄວາມໝາຍຄວາມສຳຄັນນີ້ ໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ວຽກງານໃຫ້ເລິກເຊິ່ງ ແລະ ເປັນຮູບປະທຳ ທີ່ຈະເປັນຂີດໝາຍໜຶ່ງ ເພື່ອຮັບໃຊ້ໃຫ້ແກ່ສອງວາລະແຫ່ງຊາດ ໂດຍສະເພາະແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດແລະການເງິນ ໃຫ້ມີຜົນສຳເລັດໃນປີ 2023.

ກອງປະຊຸມເຝິກອົບຮົມໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ).

(ດີລຳພົນ ພົມມະຈັນ)





## ສຸກສະບາຍຫາຍໂຣຄາ

# ການເສີມສ້າງພູມຕ້ານທານ

# ໂດຍ: ສາວແວ່ນ



ພູມຕ້ານທານມີຄວາມສຳຄັນຫລາຍຕໍ່ຮ່າງກາຍ ເພາະມີໜ້າທີ່ປ້ອງກັນພະຍາດ ແລະ ຊ່ວຍຟື້ນຟູຮ່າງກາຍໃຫ້ແຂງແຮງ ພາຍຫລັງຈາກການເຈັບປ່ວຍ ສະນັ້ນ, ຮ່າງກາຍຂອງຈະແຂງແຮງຫລືບໍ່ ມັນຂຶ້ນກັບພູມຕ້ານທານຂອງແຕ່ລະຄົນ.

ການກິນອາຫານທີ່ບໍ່ມີຄຸນຄ່າທາງສານອາຫານຈະທຳລາຍລະບົບພູມຕ້ານທານ ເຮັດໃຫ້ຮ່າງກາຍສ່ຽງຕໍ່ການເຈັບປ່ວຍ ພ້ອມທັງເປັນໄພຂົ່ມຂູ່ຈຸລັງໃນຮ່າງກາຍ ແລະ ພາໃຫ້ລະບົບພູມຕ້ານທານອ່ອນເພຍລົງ ເພາະມັນເຮັດໜ້າທີ່ຄ້າຍຄືທະຫານ ຖ້າໄດ້ຮັບສານອາຫານທີ່ຄຸນຄ່າທາງສານອາຫານຕໍ່ກໍຈະບໍ່ສາມາດປ້ອງກັນພະຍາດໄດ້ດີເທົ່າທີ່ຄວນ ເຊັ່ນອາຫານທີ່ມີແຄລໍຣີຫລາຍຈາກນ້ຳຕານ, ຊີ້ນປະເພດຕ່າງໆ ແລະ ຜະລິດຕະພັນນົມທີ່ເຕັມໄປດ້ວຍໄຂມັນ ເຊິ່ງຈະເຮັດໃຫ້ເກີດບັນຫາສຸຂະພາບ ລວມທັງໂລກອ້ວນ ແລະ ພະຍາດຕ່າງໆ ທີ່ເກີດຈາກຄວາມຜິດປົກກະຕິຂອງຂະບວນການເຜົາຜານອາຫານ ເພາະເຮັດໃຫ້ລະບົບພູມຄຸ້ມກັນບໍ່ສົມດຸນ ແລະ ອ່ອນເພຍລົງ ການກິນອາຫານທີ່ບໍ່ມີສານອາຫານຈະທຳລາຍລະບົບພູມຕ້ານທານ ຄືກັບເວລາທີ່ສັດຕູໂຈມຕີ ແລະ ທຳລາຍປ້ອມຈົນກວ່າມັນແຕກ ແລະ ອາດຈະເຮັດໃຫ້ຮ່າງກາຍມີຄວາມສ່ຽງທີ່ຈະເປັນໂລກໃໝ່ ຫລື ກັບມາເປັນພະຍາດທີ່ເຄີຍເປັນອີກ.

ໂພຊະນາການ ແມ່ນມີຄວາມສຳຄັນຫລາຍ ເນື່ອງຈາກຈຸລັງຂອງຮ່າງກາຍຕ້ອງການສານອາຫານປະເພດຕ່າງໆເຊັ່ນ

- ອາຫານກຸ່ມຫລັກໄດ້ແກ່ ໂປຕີນ, ຄາໂບໄຮເດດ ແລະ ໄຂມັນ;
- ກຸ່ມຮອງໄດ້ແກ່ວິຕາມິນ ແລະ ແຮ່ທາດ ແລະ ສຸດທ້າຍສານເຄມີທາງທຳມະຊາດ (phytonutrient) ທີ່ພົບໄດ້ໃນພືດເທົ່ານັ້ນ;

ເຮົາເຂົ້າໃຈດີເຖິງບົດບາດຄວາມສຳຄັນຂອງທາດໂປຕີນ ລວມເຖິງໄຂມັນທີ່ດີ ແລະ ຈຳເປັນເຊັ່ນ: ກົດໄຂມັນໂອເມກ້າ 3 ແລະ ເສັ້ນໄຍອາຫານ ທີ່ຊ່ວຍກະຕຸ້ນການເຮັດວຽກຂອງຈຸລິນຊີໃນລະບົບຍ່ອຍອາຫານ ນອກຈາກນີ້ ຍັງລວມເຖິງວິຕາມິນ, ແຮ່ທາດ ແລະ ສານອາຫານໃນພືດທີ່ຊ່ວຍໃຫ້ຮ່າງກາຍແຂງແຮງ ແຕ່ແນະນຳໃຫ້ເພີ່ມວິຕາມິນ ແລະ ແຮ່ທາດ ເພື່ອເພີ່ມລະບົບພູມຕ້ານທານ.



## ທັກທາຍ ລະບາຍ

# ສາວຈົ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❄ **ດີໃຈນຳ ສົມຈິດ ດວງສະຫວັນ** (ໂຕໂຕ) ທີ່ໄດ້ທາຍາດສືບບານສະກຸນ ເປັນບຸດຊາຍຄົນທຳອິດ ຊື່ວ່າ **ພີຊິດໄຊ** ຫລືວ່າ **ອາເທີ (Ar Thur)** ຊົມເຊີຍເດີທີ່ໄດ້ ມີໄສ້ທອງໃຫຍ່ຜູກສຳພັນ ຂໍໃຫ້ທັນມັງມີ ໃຫຍ່ສູງເດີຫລ້າ ພັນລະຍາທັງບຸດນ້ອຍ ຈົ່ງແຂງແຮງຄຽງຄູ່ ກັນເນີ! ຊົມເຊີຍເດີ ກົມໂຄສະນາກົດໝາຍ ສະພາແຫ່ງຊາດ ທີ່ໄດ້ ຫລານນ້ອຍເພີ່ມອີກຄົນ **ນັ້ນແລ້ວ!**

❄ **ເພື່ອ**ກະກຽມສະເຫລີມສະຫລອງ**ປີສາມັກຄີມິດຕະພາບລາວ-ຫວຽດນາມ** ໃຫ້ເປັນຂະບວນຟົດຟື້ນ **ສະມາຄົມນັກປະພັນລາວ** ປະກາດປ່າວຢ່າງກວ້າງຂວາງ ໂດຍການເຕົ້າໂຮມ ແລະປຸກລະດົມນັກປະພັນ-ນັກກະວີອາວຸໂສ-ກິດຕິມະສັກ ພ້ອມທັງລຸ້ນໜຸ່ມນ້ອຍ ທີ່ມັກ-ຮັກໃນການຂຽນ **ປະດິດແຕ່ງຜົນງານ** ເພື່ອເຂົ້າຮ່ວມໃນຂະບວນການແຂ່ງຂັນ ສົ່ງຊິ້ນສ່ວນຂຽນປະຊັນກັບກຽວກັບເນື້ອໃນ ແລະຫົວຂໍ້ດັ່ງກ່າວ "ສາວຈົ້ມ" ຂໍເລົ່າແຈ້ງ ຊາວຕ່ຜ່ານຄໍລໍານີ້ເນີ! ຄົນໃຜສົນໃຈມັກ ເລື່ອງການຂຽນນັ້ນ ໃຫ້ສົ່ງບົດປະພັນໄດ້ ທີ່ສະມາຄົມດັ່ງກ່າວ ຍາດແຍ່ງເອົາລາງວັນເພີ່ນຕັ້ງໄວ້ ມີຫລາຍລົ້ນນັບບໍ່ໄຫວ **ທ່ານເອີຍ!**

❄ **ຊ່ວງ**ການ**ກັກຕຸນນ້ຳມັນ** ອາດພາໃຫ້ເກີດອັກຄີໄພຮ້າຍແຮງ **ເຈົ້າໜ້າທີ່**ໄດ້ແຈ້ງເຕືອນມາຍັງປະຊາຊົນ**ດ້ວຍຄວາມເປັນຫ່ວງ** ເພາະໃນໄລຍະຜ່ານມາມີເຫດເກີດຂຶ້ນແລ້ວຫລາຍຄັ້ງ ພາໃຫ້ເສຍຊັບສິນຢ່າງຫລວງຫລາຍ ແລະຮ້າຍແຮງກວ່ານັ້ນ ອາດພາໃຫ້ມີການເສຍຊີວິດກໍເປັນໄດ້ ແນວໃດກໍດີ ເພີ່ນໄດ້ມີການແຕ່ງຕັ້ງຕັ້ງເຈົ້າໜ້າທີ່ສະເພາະກິດເຄື່ອນໄຫວໃຫ້ຄວາມຮູ້ ແລະ ຕັກເຕືອນຜູ້ທີ່ເອົານ້ຳມັນມາຂາຍຕາມແຄມທາງໃຫ້ຢຸດເຊົາ ຂໍໃຫ້ຊາວພີ່ນ້ອງ ລະເລີກການກະທຳສາເນີ! ເລີກກັກຕຸນຕັກຕວງ **ໃຫ້ແບ່ງປັນກັນໃຊ້** ຫວນກັບໄປເມື່ອຄາວຄັ້ງ ໂຄວິດມາໃໝ່ໆ ພີ່ນ້ອງເອີຍ! ຫລາຍຄົນກັກເຄື່ອງບໍລິໂພກໄວ້ ນີ້ຫັ້ງ (ໄຂ່-ໝີ່ໄວ) ອີກພ້ອມ ບາດພາຍທ້າຍພັດເລາະຢາຍ **ທັ້ນແລ້ວ!** (ແຈກຢາຍຍ້ອນກິນບໍ່ທັນຢ້ານມັນເນົ່າ ແລະ ໝົດອາຍຸ)

## ສາລາກະວີ

# ລະດູການ

# ຄຳພອນ ສຸຂະວົງ

❄ ຄຶມທັນຟ້າມືດຄຶ້ມ
ພຶກສາພັນຫລາກສີ
ດອກບານເຍືອງແຍ້ມ
ພູມາລິນຕອມໄຕ່ເຕົ້າ

ຝົນເລີ່ມໂຮຍຮຳ
ຈໍ່ຈີ່ຈູມກ້ານ
ປະດັບເຮືອງອວດກິ່ນ
ປະສົງນ້ຳມັດຖຸຫວານ

❄ ຕົ້ນຫຍ້າຊອນປົ່ງຊ້ອນ
ຮາກມັນຍັງມອນມຸດ
ຍາມເມື່ອຝົນໂຊຍລ້າງ
ທົ່ວທົ່ງຂຽວສະອຸ່ມເອ້

ຜຸດໂຜ່ໂຜງດິນ
ຍຸບອາຍດິນແລ້ງ
ມັນໂງຍອດປົ່ງ
ງາມແທ້ເມື່ອມອງ

❄ ຍາມຕາເວັນຊອດຊ້ອນ
ສັກກຸນາເນືອງນັນ
ຊາວນາໄວວາຟ້າວ
ເອົາຄ້ອນເຕາະຕ່ອຍຕ້ອງ

ແສງສ່ອງບົວລະພາ
ອື່ນຄອນຍາມເຊົ້າ
ກະກຽມໄຖຄາດ
ລອງໄວ້ກ່ອນຝົນ

❄ ບາງຜ່ອງເຕີມຕໍ່ຫຍ້າ
ບາງກໍຈັບສຽມຂຸດ
ກັນໝູ່ງົວຄວາຍແບ້
ປີນີ້ ກຽມແຕ່ເນີ້ນ

ມຸງມອບຫລັງຄາຖຽງ
ຕື່ມແຊມເສົາຮົ້ວ
ຂະໂຍງກິນກ້າກົບ
ຫາຫ້າງກ່ອນຝົນ

❄ ບາງກໍຝັດຄັດຈ້ອນ
ທັງຈ້າວໝຽວທົວມັນ
ເປັນວິຖີຊີວິດເຄົ້າ
ສືບກັນໄປຕໍ່ເລື້ອຍ

ເມັດປູກແນວພັນ
ແຍກສັນປັນໄວ້
ຊາວນາສວນໄຮ່
ຕາມຟ້າປ່ຽນລະດູ

## ເບີໂທສຸກເສີນ

❑ **ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

❑ **ໜ່ວຍກູ້ໄພ**

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ນາຄາ 1513

❑ **ໂຮງໝໍ**

- ມະໂຫສົດ 021 214018
- ມິດຕະພາບ 150 ຕຽງ 021 710006
- ເຊດຖາທິລາດ 021 351156
- ສູນຮັບແຈ້ງໄຂ້ຫວັດສັດປີກ 166

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ:** ຄ້ອນຕີ

ມື້ໜຶ່ງ ບາງເມຍ ບອກທິດເອນ ສ້ອມແຊມເຄື່ອງໃຊ້ໃນເຮືອນທີ່ເປ່ເພມາດົນ ພາຍຫລັງທີ່ນັ່ງເບິ່ງຜົວຕອກເຫລັກ ຕະປູດົນເຕີບ ບາງກໍເອີ່ຍຂຶ້ນວ່າ:

**ບາງເມຍ:** ຄ້ອນຕີອ້າຍປານສາຍຟ້າຜ່າເນາະ!.

**ທິດເອນ:** ນ້ອງຢາກບອກວ່າ ມັນໄວແມ່ນບໍ່?

**ບາງເມຍ:** ບໍ່ ນ້ອງຢາກວ່າ ມັນຟາດບໍ່ຖືກບ່ອນເກົ່າຈັກເທື່ອ

**ທິດເອນ:** ແຮ່ງ!!!



## ຄະຕິເຕືອນໃຈ

# ດອກສະຍອມ

ອັດສະລັບໃຈກຸ້ງ ມີຝູງບໍ່ມີໂພ່
ອັດສະລັບໝາກລັບໄມ້ ມີລີ້ນປາກບໍ່ເປັນ

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 5 ຫຼັກການກ່ຽວກັບວຽກງານຍານພາຫະນະທາງບົກ**

ວຽກງານຍານພາຫະນະທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດ ແລະ ແຜນດຳເນີນງານຄວາມປອດໄພທາງຫຼວງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຄຸ້ມຄອງ ແລະ ບໍລິການໃຫ້ມີຄວາມ ຖືກຕ້ອງ, ວ່ອງໄວ, ໂປ່ງໃສ, ທັນສະໄໝ ແລະ ສາມາດກວດສອບໄດ້;
4. ຖືກຕ້ອງຕາມມາດຕະຖານເຕັກນິກຍານພາຫະນະທາງບົກທີ່ ສປປ ລາວ ຮັບຮູ້;
5. ສອດຄ່ອງກັບສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 ພັນທະຂອງຜູ້ນຳໃຊ້ຍານພາຫະນະທາງບົກ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ນຳໃຊ້ຍານພາຫະນະທາງ ບົກ ຢູ່ດິນແດນຂອງ ສປປລາວ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ, ປະກອບສ່ວນໃນການຮັກສາຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ລວມທັງການປະຕິບັດພັນທະອື່ນ ກ່ຽວກັບວຽກງານຍານພາຫະນະທາງບົກ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວວຽກງານຍານພາຫະນະທາງບົກທຸກປະເພດ ໃນຂອບເຂດທົ່ວປະເທດ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບລົດໄຟ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຍານພາ ຫະນະທາງບົກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ການສ້າງ, ບຳລຸງ, ຍົກລະດັບດ້ານວິຊາການໃຫ້ແກ່ບຸກຄະລາກອນທັງ ພາກລັດ ແລະ ເອກະຊົນ, ການຮ່ວມມືດ້ານການລົງທຶນ, ປະຕິບັດສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ພາກທີ II**
**ປະເພດ ແລະ ການນຳເຂົ້າ ຍານພາຫະນະທາງບົກ**
**ໝວດທີ 1**
**ປະເພດຂອງຍານພາຫະນະທາງບົກ**

**ມາດຕາ 9 ປະເພດຍານພາຫະນະທາງບົກ**

ປະເພດຍານພາຫະນະທາງບົກ ມີ ດັ່ງນີ້:

1. ລົດຈັກ;
2. ລົດເບົາ;
3. ລົດຂົນສົ່ງ;
4. ລົດກົນຈັກໜັກ;
5. ລົດກົນຈັກກະສິກຳ;
6. ລົດຮັບໃຊ້ພື້ນທີ່ສະເພາະ.

**ມາດຕາ 10 ລົດຈັກ**

ລົດຈັກ ມີ ດັ່ງນີ້:

1. ສອງລໍ້;
2. ສາມລໍ້;
3. ສີ່ລໍ້.

**ມາດຕາ 11 ລົດເບົາ**

ລົດເບົາ ມີ ດັ່ງນີ້:

1. ລົດເກັງ ແມ່ນ ລົດສີ່ລໍ້ທີ່ມີບ່ອນນັ່ງບໍ່ເກີນ ຫ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນ້ຳໜັກບໍ່ເກີນ ສອງພັນຫ້າຮ້ອຍກິໂລກຣາມ;
2. ລົດກະບະ ແມ່ນ ລົດສີ່ລໍ້ທີ່ມີທ້າຍລົດເປົ່າວ່າງສຳລັບບັນທຸກ, ມີບ່ອນນັ່ງບໍ່ເກີນ ຫ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນ້ຳໜັກບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ;
3. ລົດຈິບ ແມ່ນ ລົດສີ່ລໍ້ທີ່ຍົກພື້ນສູງ, ມີບ່ອນນັ່ງບໍ່ເກີນ ເກົ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນ້ຳໜັກບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ;
4. ລົດຕູ້ ແມ່ນ ລົດສີ່ລໍ້ທີ່ມີ ໜຶ່ງ ຫຼື ສອງ ປະຕູທາງດ້ານຂ້າງເປັນບານເລື່ອນ, ມີບ່ອນນັ່ງບໍ່ເກີນ ເກົ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນ້ຳໜັກບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ.

**ມາດຕາ 12 ລົດຂົນສົ່ງ**

ລົດຂົນສົ່ງ ມີ ດັ່ງນີ້:

1. ລົດຂົນສົ່ງຜູ້ໂດຍສານ ມີ ສາມຂະໜາດ ຄື ຂະໜາດນ້ອຍ ມີບ່ອນນັ່ງບໍ່ເກີນ ເກົ້າບ່ອນ, ຂະໜາດກາງ ມີບ່ອນນັ່ງບໍ່ເກີນ ສາມສິບຫ້າບ່ອນ ແລະ ຂະໜາດໃຫຍ່ ມີບ່ອນນັ່ງແຕ່ ສາມສິບຫົກບ່ອນ ຂຶ້ນໄປ;
2. ລົດຂົນສົ່ງສິນຄ້າ ມີ ສາມຂະໜາດ ຄື ຂະໜາດນ້ອຍ ມີນ້ຳໜັກລົດບໍ່ເກີນ ສາມພັນຫ້າຮ້ອຍກິໂລ ກຣາມ, ຂະໜາດກາງ ມີນ້ຳໜັກລົດບໍ່ເກີນ ສິບຫ້າພັນກິໂລກຣາມ ແລະ ຂະໜາດໃຫຍ່ ມີນ້ຳໜັກລົດເກີນ ສິບຫ້າພັນກິໂລກຣາມ ຂຶ້ນໄປ.

**ມາດຕາ 13 ລົດກົນຈັກໜັກ**

ລົດກົນຈັກໜັກ ມີ ດັ່ງນີ້:

1. ລົດກົນຈັກໜັກທີ່ຮັບໃຊ້ທົ່ວໄປ ມີ ລົດ ດູດ, ໂລ, ໂລສັ່ນສະເທືອນ, ຈົກ, ຕັກ, ກວາດ, ຕອກເສົາເຂັມ, ຊີເຈາະ, ສີດຢາງ, ປູຢາງ, ເປົ່າລົມ, ຍົກຍໍ, ຈົກຕັກ, ຖອກເທ, ສີດເບຕົງ, ຊີມັງຜົງ, ຍົກ, ໄມ້ເບຕົງ ແລະ ອື່ນໆ;
2. ລົດກົນຈັກໜັກອຸດສາຫະກຳຂຸດຄົ້ນແຮ່ ມີ ລົດ ບັນທຸກແຮ່ທາດ,

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ**
**ຍານພາຫະນະທາງບົກ**

12. ໄຮໂດຣຄາບອນ (HC) ໝາຍເຖິງ ອາຍພິດທີ່ ບໍ່ມີສີ ແລະ ບໍ່ມີກິ່ນ ເຊິ່ງເກີດມາຈາກການເຜົາໄໝ້ຂອງເຄື່ອງຈັກທີ່ນຳໃຊ້ພະລັງງານນ້ຳມັນແອັດຊັງ ເຊິ່ງມີຜົນກະທົບຕໍ່ສຸຂະພາບ;

13. ຜະລິດຕະພັນ ໝາຍເຖິງລົດ, ຊິ້ນສ່ວນ ແລະ ອາໄຫລ່ປ່ຽນຖ່າຍ;




## ລີບັງ ເປີດການເລືອກຕັ້ງ ລັດຖະສະພາຄັ້ງທຳອິດ

**ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ**



*ພົນລະເມືອງລີບັງ ໄດ້ລົງອອກມາໃຊ້ສິດລົງຄະແນນສຽງໃນການເລືອກຕັ້ງລັດຖະສະພາໃນວັນທີ 15 ພຶດສະພາ 2022 ເປັນຄັ້ງທຳອິດ ນັບແຕ່ເສດຖະກິດຂອງປະເທດຖືກວິກິດການ ເຊິ່ງປະຊາຊົນຈຳນວນຫລາຍຫວັງວ່າເສດຖະກິດຈະໄດ້ຮັບການແກ້ໄຂດີຂຶ້ນ.*

ອີງຕາມການລາຍງານຂ່າວເມື່ອວັນທີ 15 ພຶດສະພາຜ່ານມາ ໃຫ້ຮູ້ວ່າ ການເລືອກຕັ້ງລັດຖະພາຂອງລີບັງໃນຄັ້ງດັ່ງກ່າວ ແມ່ນເປັນຄັ້ງທຳອິດ ນັບຕັ້ງແຕ່ 2018 ເຊິ່ງຖືເປັນການທົດສອບວ່າ ຝ່າຍໃດຈະໄດ້ຮັບຄະແນນສຽງສ່ວນຫລາຍໃນລັດຖະສະພາ ເຊິ່ງປັດຈຸບັນບັນຫາຄວາມທຸກຍາກ ແລະ ຄວາມບໍ່ໄວ້ວາງໃຈຂອງປະຊາຊົນຕໍ່ພັກການເມືອງນັບມື້ນັບເພີ່ມທະວີຂຶ້ນ.

ການລາຍງານຍັງໃຫ້ຮູ້ຕື່ມວ່າ ນັບຕັ້ງແຕ່ການເລືອກຕັ້ງຄັ້ງຫລ້າສຸດທີ່ຜ່ານມາ ລີບັງໄດ້ປະເຊີນໜ້າກັບການວິກິດການລົ້ມລະລາຍທາງດ້ານເສດຖະກິດ ໂດຍທະນາຄານໂລກໄດ້ຕຳນິວ່າ ສາເຫດເນື່ອງມາຈາກອົງການປົກຄອງລວມທັງຜົນກະທົບຂອງການລະເບີດຄັ້ງໃຫຍ່ທີ່ທ່າເຮືອເບຣຸດ ໃນປີ 2020.

ນັກວິເຄາະເຊື່ອວ່າ ຄວາມບໍ່ໄວ້ວາງໃຈຂອງປະຊາຊົນຈະເຮັດໃຫ້ຜູ້ສະໝັກຕ້ອງຊອກຫາການປະຕິຮູບປະເທດໃຫ້ໄດ້ຮັບບ່ອນນັ່ງຈຳນວນໜຶ່ງໃນລັດຖະສະພາ.

**ແຫລ່ງຂໍ້ມູນ: Reuters**




## ຈໍເຈຍ ຄາດວ່າຈະຮ່າງກົດໝາຍ ສະກຸນເງິນດິຈິຕອນທ້າຍປີນີ້

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

*ປັດຈຸບັນເຈົ້າໜ້າທີ່ພາກລັດຂອງປະເທດຈໍເຈຍ ກຳລັງປຶກສາຫາລືກັບຜູ້ຕາງໜ້າອຸດສາຫະກຳ ກ່ຽວກັບການອອກແບບຮ່າງກົດໝາຍເພື່ອຄວບຄຸມການຊື້-ຂາຍສະກຸນເງິນດິຈິຕອນ ແລະ ການລົງທຶນທີ່ກ່ຽວຂ້ອງກັບສະກຸນເງິນດິຈິຕອນ.*

ໃນວັນທີ 15 ພຶດສະພາ 2022 ໄດ້ມີການລາຍງານຂ່າວໃຫ້ຮູ້ວ່າ: ການຮ່າງກົດໝາຍສະກຸນເງິນດິຈິຕອນຂອງປະເທດຈໍເຈຍ ຄາດວ່າຈະເລີ່ມຕົ້ນໃນລະດູໃບໄມ້ຫລົ່ນໃນທ້າຍປີນີ້ ເຊິ່ງທະນາຄານກາງຂອງຈໍເຈຍ ໄດ້ມີການດຳເນີນການຮ່າງກົດໝາຍເພື່ອຊ່ວຍໃຫ້ຜູ້ປະກອບການສະກຸນເງິນດິຈິຕອນ ເຮັດທຸລະກິດໄດ້ສະດວກຂຶ້ນ.

ປັດຈຸບັນ, ຮອງຜູ້ວ່າການທະນາຄານກາງ ພວມມີການເຈລະຈາກັບບັນດາຜູ້ຕາງໜ້າພາກລັດ ແລະ ເອກະຊົນ, ທ່ານກ່າວວ່າ “ໃນປັດຈຸບັນ ທຸກຝ່າຍກຳລັງປຶກສາຫາລືກ່ຽວກັບວິທີການຄວບຄຸມສະກຸນເງິນດິຈິຕອນ ແລະ ພາກສ່ວນຕ່າງໆໄດ້ມີສ່ວນຮ່ວມຫລາຍຂຶ້ນ ເຊິ່ງລາຍລະອຽດຂອງເອກະສານຈະຖືກເຜີຍແຜ່ອີກເທື່ອໜຶ່ງໃນລະດູຮ້ອນນີ້”.

ເຈົ້າໜ້າທີ່ທະນາຄານກາງທ່ານໜຶ່ງ ກ່າວວ່າ “ການຮ່າງກົດໝາຍດັ່ງກ່າວ ຈະລວມທັງການປົກປ້ອງຜູ້ບໍລິໂພກ ແລະ ການຊື້-ຂາຍສະກຸນເງິນດິຈິຕອນ, ບໍ່ວ່າຈະເປັນລະບຽບການຕ່າງໆໃນການບໍລິການຂອງສື່ອອນລາຍທີ່ໃຊ້ໃນການຄ້າຂາຍສະກຸນເງິນດິຈິຕອນ, ບົດບາດຂອງບໍລິສັດຊື້-ຂາຍສະກຸນເງິນດິຈິຕອນ”.

ປັດຈຸບັນ ປະຊາຊົນຈໍເຈຍ ກຳລັງສຸມໃສ່ການຂຸດຄົ້ນຫລຽນດິຈິຕອນຫລາຍຂຶ້ນ, ກາຍເປັນທຸລະກິດທີ່ນິຍົມ ແລະ ສ້າງລາຍຮັບເພີ່ມ ເຊິ່ງອີງຕາມການວິໄຈໂດຍ Cambridge Center for Financial Alternatives ໃຫ້ຮູ້ວ່າ ໃນປັດຈຸບັນ ຈໍເຈຍເປັນປະເທດທີ່ໜ້າດຶງດູດສຳລັບການຂຸດຄົ້ນຫລຽນດິຈິຕອນ ເນື່ອງຈາກຄ່າໄຟຟ້າຕ່ຳ ຈຶ່ງຊ່ວຍໃຫ້ປະຊາຊົນສາມາດຂຸດຫລຽນດິຈິຕອນເປັນອາຊີບໄດ້.

**ແຫລ່ງຂ່າວ: CryptoSiam**



# ພາບບັນຍາກາດການເຄື່ອນໄຫວຢ້ຽມຢາມສັນຖະວະໄມຕີ ສປປລາວ ທີ່ນະຄອນຫລວງວຽງຈັນ

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON

















**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ